ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 1901009/ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ: 31/01/2019

ຮຽນ : ທ່ານຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຫຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2019

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03 ເມສາ 2014
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ "ມຫທຊ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2019 ວັນທີ 30 ມັງກອນ 2019, ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງມີລາຍລະອຽດລຸ່ມນີ້:

1. ຮັບຮອງລາຍງານການປະຊຸມຄັ້ງທີ 3/2018 ວັນທີ 23 ຕຸລາ 2018
2. ຮັບຊາບຜົນປະກອບການຂອງບໍລິສັດ ປະຈຳປີ 2018
3. ຮັບຊາບສະຖານະທະແສງເງິນສົດຂອງບໍລິສັດ ສິ້ນສຸດ 31 ທັນວາ 2018
4. ອະນຸມັດກຳນົດເງິນບຳເນັດປະຈຳປີ (Yearly Bonus) ໃຫ້ແກ່ສະມາຊິກສະພາບໍລິຫານ ຕາມຜົນປະກອບການປະຈຳປີ 2018, ຊຶ່ງຈະໄດ້ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດໃນຂັ້ນຕໍ່ໄປ
5. ອະນຸມັດງົບປະມານໃນການຈ່າຍຜົນຕອບແທນປະຈຳປີ (Yearly Bonus) ຕາມຜົນປະກອບການປະຈຳປີ 2018 ແລະ ປັບເງິນເດືອນ ປະຈຳປີ 2019 ໃຫ້ແກ່ພະນັກງານຂອງບໍລິສັດ
6. ອະນຸມັດການແຕ່ງຕັ້ງຜູ້ຮັບຜິດຊອບວຽກງານລາຍງານ ແລະ ເປີດເຜີຍຂໍ້ມູນຕໍ່ຕະຫຼາດຫຼັກຊັບລາວ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພີ່ມຕື່ມອີກ 2 ທ່ານ ດັ່ງນີ້:
   6.1 ແຕ່ງຕັ້ງ ທ່ານ ທອງຖະຫວັນ ທອງແຖມ, ຮອງຜູ້ອຳນວຍການດ້ານການເງິນ
   6.2 ແຕ່ງຕັ້ງ ທ່ານ ນາງ ສຸລິພອນ ສຸວັນໄຊລົບ, ຜູ້ຈັດການພະແນກບັນຊີ ແລະ ໄອຊີທີ

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມນັບຖືຢ່າງສູງ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

(ທ່ານ ມານິບ ຕຣິສິດວິໄລ)